ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ
ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ລັດຖະບານ ແຫ່ງ ສປປ ລາວ

ເລກທີ: 07 /ລບ
ນະຄອນຫຼວງວຽງຈັນ, ວັນທີ: 04.10.2021

# ມະຕິ
# ວ່າດ້ວຍການແບ່ງຄວາມຮັບຜິດຊອບ ໃນການຈັດຕັ້ງຜັນຂະຫຍາຍມະຕິ ຂອງສະພາແຫ່ງຊາດ ກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ

- ອີງຕາມ ກົດໝາຍ ວ່າດ້ວຍລັດຖະບານ ສະບັບເລກທີ 04/ສພຊ, ລົງວັນທີ 08 ພະຈິກ 2016;
- ອີງຕາມ ມະຕິຂອງກົມການເມືອງສູນກາງພັກ ວ່າດ້ວຍການເພີ່ມທະວີການນໍາພາແກ້ໄຂບັນຫາເສດຖະກິດ-ການເງິນ ແລະ ສ້າງຄວາມເຂັ້ມແຂງໃນການຄຸ້ມຄອງມະຫາພາກ ສະບັບເລກທີ 057/ຄບສພ, ລົງວັນທີ 19 ທັນວາ 2018;
- ອີງຕາມ ຂໍ້ຕົກລົງວ່າດ້ວຍລະບຽບການ ແລະ ກົນໄກການເຮັດວຽກ ຂອງລັດຖະບານ ຊຸດທີ IX ສະບັບເລກທີ 41/ນຍ, ລົງວັນທີ 30 ເມສາ 2021;
- ອີງຕາມ ມະຕິຂອງສະພາແຫ່ງຊາດ ວ່າດ້ວຍການຮັບຮອງເອົາວາລະແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ ສະບັບເລກທີ 03/ສພຊ, ລົງວັນທີ 10 ສິງຫາ 2021.

## ລັດຖະບານ ຕົກລົງ:

**ມາດຕາ 1:** ແບ່ງຄວາມຮັບຜິດຊອບໃຫ້ບັນດາຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນໃນການຈັດຕັ້ງຜັນຂະຫຍາຍ ມະຕິຂອງສະພາແຫ່ງຊາດກ່ຽວກັບການແກ້ໄຂຄວາມຫຍຸ້ງຍາກທາງດ້ານເສດຖະກິດ-ການເງິນ, ຊຶ່ງມີລາຍລະອຽດ ດັ່ງຕໍ່ໄປນີ້:

**1.1. ກະຊວງແຜນການ ແລະ ການລົງທຶນ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

- ປັບປຸງສະພາບແວດລ້ອມໃນການລົງທຶນ ໂດຍໃຫ້ກວດກາ ແລະ ពិຈາລະນາ ຄືນບັນດາກົດໝາຍ ແລະ ນິຕິກໍາລຸ່ມກົດໝາຍທີ່ກ່ຽວຂ້ອງກັບວຽກງານດັ່ງກ່າວ, ນິຕິກໍາອັນໃດເຫັນວ່າບໍ່ສອດຄ່ອງ, ມີຫຼາຍຂັ້ນຂອດ, ເປັນສິ່ງກີດຂວາງ, ກົດໜ່ວງຖ່ວງດຶງ ແລະ ສ້າງຄວາມຫຍຸ້ງຍາກລໍາບາກໃຫ້ຜູ້ປະກອບການ ຫຼື ນັກລົງທຶນ ແມ່ນໃຫ້ຮີບຮ້ອນປັບປຸງໄວ ເພື່ອເຮັດໃຫ້ການຈັດອັນດັບຄວາມຍາກງ່າຍໃນການດໍາເນີນທຸລະກິດ-ການລົງທຶນຢູ່ລາວ ມີອັນດັບດີຂຶ້ນກວ່າເກົ່າ; ປັບປຸງກົນໄກ, ຂັ້ນຕອນ ແລະ ການແບ່ງຄວາມຮັບຜິດຊອບ ໃນການພິຈາລະນາອະນຸມັດໂຄງການລົງທຶນຂອງ ຄະນະກໍາມະການສົ່ງເສີມ ແລະ ຄຸ້ມຄອງການລົງທຶນຂັ້ນສູນກາງ ແລະ ທ້ອງຖິ່ນ ໃຫ້ໄວຂຶ້ນກວ່າເກົ່າ;
- ກວດກາຄືນໂຄງການລົງທຶນຂອງລັດ ທີ່ໄດ້ຕົກລົງໃນໄລຍະຜ່ານມາ, ໂຄງການໃດ ເຫັນວ່າບໍ່ມີຄວາມຈໍາເປັນ ແມ່ນໃຫ້ຢຸດເຊົາ ຫຼື ໂຈະໄວ້ກ່ອນ, ໂຄງການທີ່ມີຄວາມຈໍາເປັນ ແຕ່ມູນຄ່າສູງເກີນຄວາມເປັນຈິງ ກໍໃຫ້ເຈລະຈາຕໍ່ລອງໃຫ້ຕັດມູນຄ່າລົງ; ສ້າງແຜນຊໍາລະໜີ້ສິນໂຄງການລົງທຶນຂອງລັດ ແບບລວມສູນ

ໂດຍກຳນົດແຈ້ງແຫຼ່ງທຶນທີ່ຈະນຳມາຊຳລະໃນແຕ່ລະປີ ແນໃສ່ເຮັດໃຫ້ໜີ້ສິນໂຄງການລົງທຶນຂອງລັດຫຼຸດລົງຢ່າງຈະແຈ້ງ; ສ້າງແຜນລົງທຶນຂອງລັດ ໃນແຕ່ລະປີໃຫ້ສອດຄ່ອງກັບຄວາມສາມາດຕົວຈິງຂອງງົບປະມານຂອງລັດ ແລະ ຕາມກົດໝາຍກຳນົດ ທັງແກ້ໄຂປະກົດການຫຍໍ້ທໍ້ໃນການປະມູນ, ຈັດຊື້-ຈັດຈ້າງໂຄງການລົງທຶນຂອງລັດ;

- ສ້າງ ແລະ ປັບປຸງແຜນວຽກ, ແຜນຄົນ ແລະ ແຜນງົບປະມານ ທີ່ຕິດພັນກັບວາລະແຫ່ງຊາດ ໃຫ້ມີຄວາມສອດຄ່ອງ ແລະ ເປັນລະບົບ, ແບ່ງຂັ້ນຄຸ້ມຄອງ ແລະ ແບ່ງຄວາມຮັບຜິດຊອບ ລະຫວ່າງຂະແໜງການ ຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ ໃຫ້ຈະແຈ້ງຕາມທິດສາມສ້າງ, ພ້ອມທັງຊີ້ນຳຂະແໜງການທີ່ກ່ຽວຂ້ອງ ຄົ້ນຄວ້າກຳນົດຄາດໝາຍສູ້ຊົນ, ຕົວຊີ້ວັດ ແລະ ມາດຕະການດ້ານຕ່າງໆ ໃຫ້ຖືກຕ້ອງ, ຊັດເຈນ, ມີຈຸດສຸມ ແລະມີຄວາມຈຳເປັນກວ່າໝູ່ ຊຶ່ງແຕກຕ່າງກັບແຜນວຽກປົກກະຕິ ສາມາດຈັດຕັ້ງປະຕິບັດໃນໄລຍະເວລາທີ່ວາງໄວ້ ແນໃສ່ເປັນບ່ອນອີງໃນການຈັດຕັ້ງປະຕິບັດ ແລະ ສະດວກໃນການຕິດຕາມ-ກວດກາຕົວຈິງ. ສ້າງແຜນພັດທະນາເສດຖະກິດ-ສັງຄົມ ຕາມແລວທາງລົດໄຟ ລາວ-ຈີນ ແລະ ໃຫ້ສອດຄ່ອງກັບໂຄງການດັ່ງກ່າວ;
- ທົດລອງປະຕິບັດນະໂຍບາຍໃໝ່ ກ່ຽວກັບການຂຸດຄົ້ນແຮ່ເຫຼັກ ໂດຍໃຫ້ກຳນົດເນື້ອທີ່ ແລະ ທີ່ຕັ້ງຂອງໂຄງການຢ່າງຈະແຈ້ງ, ຮັບປະກັນໃຫ້ມີຕະຫຼາດຮອງຮັບຢ່າງແນ່ນອນ, ພາຍຫຼັງສຳເລັດການຈັດຕັ້ງປະຕິບັດໄລຍະທົດລອງ 3 ປີ ໃຫ້ປະເມີນຜົນ ແລະ ສະຫຼຸບລາຍງານຄືນ ການຈັດຕັ້ງປະຕິບັດນະໂຍບາຍດັ່ງກ່າວ, ຖ້າເຫັນວ່າມີປະສິດທິຜົນ ແລະ ມີຄວາມຈຳເປັນສືບຕໍ່ ຕ້ອງໄດ້ປັບປຸງກົດໝາຍ ແລະ ນິຕິກຳທີ່ກ່ຽວຂ້ອງໃຫ້ສອດຄ່ອງ, ຮັບປະກັນບໍ່ໃຫ້ມີຜົນກະທົບຮ້າຍແຮງຕໍ່ສິ່ງແວດລ້ອມ, ທຳມະຊາດ ແລະ ສັງຄົມ ພ້ອມທັງມີມາດຕະການແກ້ໄຂແຕ່ຫົວທີ ໂດຍສະເພາະການຊົດເຊີຍ ແລະ ທົດແທນຄ່າເສຍຫາຍ, ການຍົກຍ້າຍປະຊາຊົນ ແລະ ການພັດທະນາອາຊີບ ໃຫ້ແກ່ປະຊາຊົນທີ່ໄດ້ຮັບຜົນກະທົບຈາກໂຄງການ.

1.2. **ກະຊວງການເງິນ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

- ຈັດຕັ້ງປະຕິບັດແຜນລາຍຮັບ-ການຄຸ້ມຄອງລາຍຈ່າຍ ງົບປະມານ ແລະ ປັບປຸງການເກັບລາຍຮັບ ພາສີ-ອາກອນ, ຄ່າທຳນຽມ ແລະ ຄ່າບໍລິການຕ່າງໆ ຕາມທິດທັນເປັນທັນສະໄໝ ພ້ອມທັງການຂະຫຍາຍຖານລາຍຮັບໃໝ່ທີ່ມີທ່າແຮງ ໃຫ້ເປັນຮູບປະທຳ;
- ແກ້ໄຂຂໍ້ຄົງຄ້າງ ແລະ ອັດຊ່ອງວ່າງການຮົ່ວໄຫຼຕ່າງໆ ເຊັ່ນ: ລາຍຮັບຈາກການສົ່ງອອກແຮ່ທາດ, ລາຍຮັບຈາກທີ່ດິນ, ຄ່າເຊົ່າສຳປະທານທີ່ດິນລັດ, ລາຍຮັບຈາກທຸລະກິດ ຊື້-ຂາຍ ອອນລາຍ, ລາຍຮັບຈາກພະຫານະ, ນ້ຳມັນ ແລະ ອື່ນໆ; ຄົ້ນຄວ້າການແບ່ງພູດ ລາຍຮັບລະຫວ່າງຂະແໜງການຂັ້ນສູນກາງ ແລະ ອົງການປົກຄອງຂັ້ນທ້ອງຖິ່ນ;ຄົ້ນຄວ້າວິທີການ, ກົນໄກ, ການປະຕິບັດກົນໄກ ກ່ຽວກັບການປະຫຍັດມັດທະຍັດ ແລະ ຕ້ານການຟຸມເຟືອຍ;
- ຄົ້ນຄວ້າປັບປຸງ ລະບຽບການ ແລະ ວິທີການ ໃນການນຳໃຊ້ງົບປະມານບໍລິຫານປົກກະຕິ ຕາມທິດປະຍັດ ແລະ ຕ້ານການຟຸມເຟືອຍ;
- ແກ້ໄຂໜີ້ສິນ ແລະ ສ້າງແຜນຊຳລະໜີ້ສິນທັງພາຍໃນ ແລະ ຕ່າງປະເທດ ໂດຍກຳນົດແຫຼ່ງທຶນໃຫ້ມີຄວາມຊັດເຈນ ເພື່ອໃຫ້ໜີ້ສິນຕ່າງປະເທດຫຼຸດລົງ ແຕ່ລະປີ;
- ແກ້ໄຂບັນຫາການນຳເຂົ້າພະຫານະທີ່ບໍ່ຖືກຕ້ອງ ໃນໄລຍະຜ່ານມາໃຫ້ຂາດຕົວ;
- ເລັ່ງລັດປະຕິຮູບວິສາຫະກິດລັດ ທີ່ດຳເນີນທຸລະກິດບໍ່ມີປະສິດທິຜົນ, ຂາດທຶນຕໍ່ເນື່ອງ ແລະ ບໍ່ສາມາດຟື້ນໄດ້ ດ້ວຍການປັບປຸງການບໍລິຫານ ແລະ ບຸກຄະລາກອນ ໃຫ້ມີປະສິດທິພາບ.

1.3. ທະນາຄານແຫ່ງ ສປປ ລາວ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງ ຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:

- ເອົາໃຈໃສ່ຄຸ້ມຄອງອັດຕາເງິນເຟີ້, ອັດຕາການແລກປ່ຽນ ໃຫ້ຢູ່ໃນຂອບທີ່ສະພາແຫ່ງຊາດ ກໍຄືລັດຖະບານໄດ້ຮັບຮອງ; ສ້າງຄັງສຳຮອງເງິນຕາຕ່າງປະເທດ, ຫຼຸດຜ່ອນໜີ້ທີ່ບໍ່ເກີດດອກອອກຜົນ, ສ້າງການຫັນປ່ຽນໃໝ່ໃນລະບົບຄຸ້ມຄອງເງິນຕາຕ່າງປະເທດ ແລະ ຄຸມຄອງລາຍຮັບເງິນຕາ ແລະ ການຊຳລະສະສາງຜ່ານລະບົບທະນາຄານ;
- ປັບປຸງທະນາຄານທຸລະກິດຂອງລັດ ໃຫ້ມີຄວາມສາມາດດຳເນີນທຸລະກິດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ທັງສາມາດປະກອບພັນທະໃຫ້ແກ່ງົບປະມານຂອງລັດ;
- ປັບປຸງກົນໄກການຄຸ້ມຄອງສະຖາບັນການເງິນຈຸລະພາກ;
- ປັບປຸງກົນໄກ, ມາດຕະການ ແລະ ວິທີການ ໃນການຄຸ້ມຄອງຮ້ານແລກປ່ຽນເງິນຕາ ໃຫ້ຂຶ້ນກັບທະນາຄານໃຫ້ສຳເລັດ. ພ້ອມກັນນັ້ນ, ກໍ່ຄົ້ນຄວ້າຄືນການກຳນົດສ່ວນຕ່າງ ລະຫວ່າງອັດຕາຊື້ ແລະ ອັດຕາຂາຍເງິນຕາຕ່າງປະເທດ ໃຫ້ສົມເຫດສົມຜົນ ເພື່ອໃຫ້ຜູ້ປະກອບການຮ້ານແລກປ່ຽນເງິນຕາ ສາມາດສາມາດເຄື່ອນໄຫວໄດ້ຢ່າງເປັນລະບົບ.

1.4. ກະຊວງອຸດສາຫະກຳ ແລະ ການຄ້າ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:

- ເພີ່ມທະວີການຄຸ້ມຄອງລາຄາສິນຄ້າອຸປະໂພກ-ບໍລິໂພກ;
- ກວດກາ ແລະ ປັບປຸງນະໂຍບາຍສົ່ງເສີມຈຸນລະວິສາຫະກິດ, ວິສາຫະກິດຂະໜາດນ້ອຍ ແລະ ກາງ ໃຫ້ລະອຽດຈະແຈ້ງກວ່າເກົ່າ ເປັນຕົ້ນການເຂົ້າເຖິງແຫຼ່ງທຶນດອກເບ້ຍຕໍ່າ, ການຊອກຕະຫຼາດຈຳໜ່າຍ, ການສ້າງຕ່ອງໂສ້ການຜະລິດ ພ້ອມທັງການບໍລິການໃຫ້ຄຳປຶກສາດ້ານກົດໝາຍ ແລະ ວິຊາການ, ສ້າງຄວາມເຂັ້ມແຂງ ໃຫ້ຜູ້ປະກອບການໃໝ່ ເພື່ອເປັນຖານລາຍຮັບທີ່ໝັ້ນຄົງ ຕາມທິດຫັນປ່ຽນຈາກສັງຄົມບໍລິໂພກໄປສູ່ສັງຄົມການຜະລິດ;
- ຄົ້ນຄວ້າປັບປຸງເງື່ອນໄຂການອະນຸຍາດ ໃຫ້ດຳເນີນທຸລະກິດຄືນໃໝ່ໂດຍໃຫ້ເພີ່ມເງື່ອນໄຂ ການຖືບັນຊີ ແລະ ນຳໃຊ້ລະບົບບັນຊີທີ່ລັດກຳນົດ;
- ສືບຕໍ່ປັບປຸງຜູ້ປະກອບການທຸລະກິດນ້ຳມັນເຊື້ອໄຟຕາມ ດຳລັດສະບັບເລກທີ 331/ນຍ, ລົງວັນທີ 27 ຕຸລາ 2017;
- ສືບຕໍ່ຈັດຕັ້ງປະຕິບັດການປັບປຸງນິຕິກຳ, ກົນໄກ ແລະ ວິທີການເກັບລາຍຮັບຈາກໄມ້ ແລະ ຜະລິດຕະພັນໄມ້ ກໍຄືການຊຳລະສະສາງໄມ້ເກົ່າຄ້າງສາງທີ່ລັດຖະບານໄດ້ຕົກລົງຕາມແຈ້ງການ ສະບັບເລກທີ 885/ນຍ, ລົງວັນທີ 28 ກໍລະກົດ 2021ໃຫ້ສຳເລັດ.
- ປັບປຸງລະບຽບການ ແລະ ກົນໄກການຄຸ້ມຄອງ ຕົວແທນຈຳໜ່າຍພາຫະນະ, ຕົວແທນນຳເຂົ້າສິນຄ້າ ໂດຍພະຍາຍາມປັບບັນດາຫົວໜ່ວຍທຸລະກິດດັ່ງກ່າວ ຖືບັນຊີຕາມກົດໝາຍກຳນົດ.

1.5. ກະຊວງກະສິກຳ ແລະ ປ່າໄມ້ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:

- ຍູ້ແຮງການຜະລິດພາຍໃນ ເພື່ອທົດແທນການນຳເຂົ້າ ແລະ ເປັນສິນຄ້າສົ່ງອອກ ໃຫ້ຫຼາຍຂຶ້ນຕາມແລວທາງເສດຖະກິດ ເພື່ອເຊື່ອມຈອດພາຍໃນ ແລະ ພາກພື້ນ, ໂດຍສະເພາະເລັ່ງໃສ່ຊຸກຍູ້ການຜະລິດກະສິກຳທີ່ມີທ່າແຮງ ແລະ ຕະຫຼາດຮອງຮັບ, ຟື້ນຟູ ແລະ ປັບປຸງໂຄງລ່າງພື້ນຖານ ການຜະລິດກະສິກຳ ໃຫ້ມີປະສິດທິພາບສູງ; ຍົກລະດັບສູນຄົ້ນຄວ້າ ແລະ ການສະໜອງທຶນ ໃຫ້ແກ່ສູນບໍລິການເຕັກນິກກະສິກຳແນໃສ່ສະໜອງແນວພັນພືດ-ສັດ ແລະ ເຕັກນິກວິຊາການ ໃຫ້ແກ່ຜູ້ທຳການຜະລິດ ເພື່ອຫຼຸດຜ່ອນຕົ້ນທຶນ

ການຜະລິດ ເພີ່ມສະມັດຕະພາບ ແລະ ຄຸນນະພາບ ໃນການຜະລິດ, ລາຄາສົມເຫດສົມຜົນ ເພື່ອສາມາດແຂ່ງຂັນກັບປະເທດອ້ອມຂ້າງ ແລະ ສາກົນ;

- ຄຸ້ມຄອງ, ສົ່ງເສີມ ແລະ ພັດທະນາໂຮງງານອຸດສາຫະກຳປຸງແຕ່ງກະສິກຳ-ປ່າໄມ້ ເພື່ອຜະລິດເປັນສິນຄ້າສະໜອງຕະຫຼາດພາຍໃນ ແລະ ສົ່ງອອກຕ່າງປະເທດ;
- ເລັ່ງລັດການເຈລະຈາທາງດ້ານສຸຂະອະນາໄມພືດ ແລະ ສັດ (SPS) ເພື່ອໃຫ້ສິນຄ້າລາວສາມາດສົ່ງອອກໄປຕ່າງປະເທດໄດ້ ໂດຍສະເພາະສົ່ງໄປ ສປ ຈີນ ທີ່ເປັນຕະຫຼາດໃຫຍ່.

**1.6. ກະຊວງຊັບພະຍາກອນທຳມະຊາດ ແລະ ສິ່ງແວດລ້ອມ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

- ປັບປຸງກົນໄກ, ຂັ້ນຕອນ ການສ້າງບົດປະເມີນຜົນກະທົບຕໍ່ສິ່ງແວດລ້ອມ-ສັງຄົມ ໃນໂຄງການຕ່າງໆ ໃຫ້ກະທັດຮັດ ໂດຍສ້າງປຶ້ມຄູ່ມືແນະນຳ ສຳລັບໂຄງການຂຸດຄົ້ນແຮ່ທາດ ໃນໄລຍະເຮັດການທົດລອງ. ກໍລະນີມີຄວາມຈຳເປັນ ແມ່ນໃຫ້ເຈົ້າຂອງໂຄງການ ວ່າຈ້າງຊ່ຽວຊານທັງພາຍໃນ ແລະ ຕ່າງປະເທດ ທີ່ມີຄວາມໜ້າເຊື່ອຖືມາຊ່ວຍໃນການທົບທວນ ແລະ ຢັ້ງຢືນຜົນການທົບທວນ ບົດລາຍງານການປະເມີນຜົນກະທົບຕໍ່ສິ່ງແວດລ້ອມແບບລະອຽດ ແລະ ແຜນຄຸ້ມຄອງ ແລະ ຕິດຕາມກວດກາສິ່ງແວດລ້ອມ ລວມທັງວຽກງານຕິດຕາມກວດກາ ສິ່ງແວດລ້ອມໂຄງການ ຕາມການສະເໜີ;
- ຈັດສັນທີ່ດິນຢູ່ທ້ອງຖິ່ນຕ່າງໆ ທີ່ລຽບຕາມແລວທາງລົດໄຟ ລາວ-ຈີນ ໃຫ້ລະອຽດ ໂດຍສະເພາະແມ່ນກຳນົດເຂດສະຫງວນ ເພື່ອນຳໃຊ້ເຂົ້າໃນການຜະລິດກະສິກຳ, ການປຸກສ້າງ, ເຂດອຸດສາຫະກຳ, ການຄ້າ, ບໍລິການ, ວັດທະນະທຳ, ການທ່ອງທ່ຽວ ແລະ ເຂດອື່ນໆ ເພື່ອຮອງຮັບການລົງທຶນ ແລະ ການລະດົມທຶນຢູ່ໃນເຂດດັ່ງກ່າວ ຕາມແຜນພັດທະນາເສດຖະກິດ-ສັງຄົມ ໄດ້ກຳນົດ;
- ເພີ່ມທະວີການກວດກາ ການນຳໃຊ້ທີ່ດິນຂອງລັດ ໃນໂຄງການລົງທຶນຕ່າງໆ ຖ້າໂຄງການໃດຈັບຈອງທີ່ດິນໄວ້ ໂດຍບໍ່ມີການພັດທະນາ ແມ່ນຕ້ອງໄດ້ປະຕິບັດຕາມກົດໝາຍ ແລະ ລະບຽບການກ່ຽວຂ້ອງ ຢ່າງເຂັ້ມງວດ;
- ກວດກາ ແລະ ປັບປຸງຄືນ ນິຕິກຳ ແລະ ລະບຽບການຕ່າງໆ ໃນການຂຶ້ນທະບຽນອອກໃບຕາດິນ, ການຈົດທະບຽນຊັບສິນ ລວມທັງຂັ້ນຕອນ, ກຳນົດເວລາ ແລະ ຄ່າທຳນຽມຕ່າງໆ ຕາມທິດທັນເປັນທັນສະໄໝ; ສະໜອງຂໍ້ມູນທາງດ້ານທີ່ດິນ ໃຫ້ຂະແໜງການເງິນ ເພື່ອເກັບລາຍຮັບຈາກທີ່ດິນ ແລະ ຫັນລະບົບການຊຳລະຊື້-ຂາຍທີ່ດິນ ຜ່ານລະບົບທະນາຄານ.

**1.7. ກະຊວງພະລັງງານ ແລະ ບໍ່ແຮ່ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

- ຄົ້ນຄວ້າອອກນະໂຍບາຍ ແລະ ມາດຕະການຫຼຸດຜ່ອນ ການນຳເຂົ້າກະແສໄຟຟ້າຈາກຕ່າງປະເທດ ເພື່ອຫຼຸດຜ່ອນການຈ່າຍເງິນຕາຕ່າງປະເທດ;
- ຄົ້ນຄວ້າປັບປຸງກົດໝາຍ ແລະ ນິຕິກຳລຸ່ມກົດໝາຍ ທີ່ກ່ຽວກັບແຮ່ທາດໂດຍອີງໃສ່ ພຶດຕິກຳຕົວຈິງ ຈາກການເຮັດທົດລອງ ໃນການເກັບລາຍຮັບແບບມອບເໝົາຈາກໂຄງການບໍ່ແຮ່ ໂດຍສະເພາະປັບປຸງປຸງ ແລະ ຕັດຂັ້ນຕອນ ກໍຄືຂະບວນການພິຈາລະນາຮັບຮອງສຳຫຼວດ ບົດວິພາກທາງດ້ານເສດຖະກິດເຕັກນິກ ໃຫ້ສົມທົບກັບຕື່ມລົງເລິກເບິ່ງສະເພາະບັນຫາທີ່ຕິດພັນກັບຜົນປະໂຫຍດຂອງລັດ ທີ່ສົມຄວນຕ້ອງໄດ້ຮັບ;
- ປັບປຸງລັດຖະບັນຍັດ ວ່າດ້ວຍອັດຕາຄ່າຊັບພະຍາກອນທຳມະຊາດ, ຕາມທິດເພີ່ມອັດຕາຄ່າຊັບພະຍາກອນທຳມະຊາດຂຶ້ນ ແລະ ຫຼຸດອາກອນກຳໄລລົງ ເພື່ອໃຫ້ສາມາດເກັບເປັນລາຍໄດ້ງ່າຍ, ໄດ້ໄວ ແລະ ໄດ້ຫຼາຍກວ່າເກົ່າ ທັງຈຳກັດຊ່ອງຫວ່າງການຮົ່ວໄຫຼຂອງງົບປະມານ;
- ຕິດຕາມຊຸກຍູ້ການຈັດຕັ້ງປະຕິບັດນະໂຍບາຍ ການຫັນສູ່ການນຳໃຊ້ລົດໄຟຟ້າ;
- ກວດກາຄືນແຜນພັດທະນາ ແລະ ແຜນນຳໃຊ້ພະລັງງານໄຟຟ້າ ເພື່ອແກ້ໄຂບັນຫາໄຟຟ້າເຫຼືອໃນຍາມຝົນແຕ່ຂາດໄຟຟ້າໃນຍາມແລ້ງ.

1.8. ກະຊວງໂຍທາທິການ ແລະ ຂົນສົ່ງ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:

- ເປັນໃຈກາງຈັດຕັ້ງຜັນຂະຫຍາຍມາດຕະການ ໃນວຽກງານພັດທະນາພື້ນຖານໂຄງລ່າງເຊື່ອມຈອດ ເຂົ້າສູ່ແລວທາງເສດຖະກິດ ແລະ ເຂດການຜະລິດ, ພ້ອມທັງພັດທະນາລະບົບການຂົນສົ່ງ, ເຂດໂລຊິດສະຕິກ ແລະ ເຂດທ່າບົກທີ່ທັນສະໄໝ ເພື່ອສົ່ງເສີມການຜະລິດ ແລະ ບໍລິການຕາມແລວເສດຖະກິດພາຍໃນ ແລະ ພາກພື້ນ ບົນພື້ນຖານຫຼັກການ, ມີຈຸດສຸມ ແລະ ວ່ອງໄວ;
- ຂະຫຍາຍພື້ນຖານໂຄງລ່າງທີ່ຈຳເປັນເຊື່ອມຈອດ ເຂົ້າສູ່ແລວທາງເສດຖະກິດບົນຫຼັກການສ້າງລະບົບຂົນສົ່ງຫຼາຍຮູບແບບ (Multi Modal Transport), ເລັ່ງຈັດຕັ້ງປະຕິບັດບັນດາໂຄງການທີ່ ລັດຖະບານໄດ້ຮັບຮອງ, ອະນຸມັດ ເຂົ້າສູ່ເຂດການຜະລິດກະສິກຳ, ເຂດອຸດສາຫະກຳ ແລະ ເຂດທີ່ມີໂຄງລ່າງພື້ນຖານສຳຄັນແລ້ວ ເຊັ່ນ: ການຄົມມະນາຄົມທາງບົກ, ທາງນ້ຳ, ທາງລົດໄຟ ແລະ ທາງ ອາກາດ (ເສັ້ນທາງລົດໄຟ, ເສັ້ນທາງດ່ວນ, ເສັ້ນທາງເດີນເຮືອ, ທາງອາກາດ...);
- ສ້າງເງື່ອນໄຂ ເພື່ອອຳນວຍຄວາມສະດວກ ເພື່ອດຶງດູດການລົງທຶນ ແລະ ຊຸກຍູ້ການພັດທະນາ ໂຄງການເຂດອຸດສາຫະກຳ, ເຂດຕົວເມືອງ Smart city, ເຂດໂລຊິດສະຕິ ແລະ ເຂດທ່າບົກ, ເຂດ ບໍລິການການຄ້າປອດພາສີ ທີ່ມີຄວາມສາມາດຈັດຕັ້ງປະຕິບັດ ໃນ 2 ປີຕໍ່ໜ້າ (2022-2023) ຢູ່ຕາມແລວທາງເສດຖະກິດລາວ-ຈີນ ແລະ ເຂດການຄ້າຊາຍແດນໃຫ້ໄດ້ໄວ;
- ເລັ່ງພັດທະນາຜູ້ປະກອບການດ້ານການຂົນສົ່ງ ພາຍໃນໃຫ້ເຂັ້ມແຂງ, ສ້າງເງື່ອນໄຂ ແລະ ນະໂຍບາຍສົ່ງເສີມໃຫ້ຂະແໜງການບໍລິການຂົນສົ່ງ ຍົກປະສິດທິພາບສູງຂຶ້ນ, ຫຼຸດຕົ້ນທຶນ ແລະ ຂອດຂັ້ນທີ່ເປັນອຸປະສັກໃຫ້ແກ່ການບໍລິການຂົນສົ່ງ ເປັນຕົ້ນ ການປັບປຸງມາດຕະຖານເຕັກນິກ, ການນຳໃຊ້ວັດສະດຸພາຍໃນ ເຂົ້າໃນການກໍ່ສ້າງ ເພື່ອຫຼຸດຕົ້ນທຶນ ແລະ ຫຼຸດຜ່ອນການນຳເຂົ້າ ແລະ ອື່ນໆ.

1.9. ກະຊວງແຮງງານ ແລະ ສະຫວັດດີການສັງຄົມ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:

- ຂຶ້ນທະບຽນແຮງງານລາວ, ແຮງງານຕ່າງປະເທດ ທີ່ເຮັດວຽກຢູ່ບັນດາຫົວໜ່ວຍແຮງງານ, ໂຄງການລົງທຶນທັງພາຍໃນ ແລະ ຕ່າງປະເທດ, ເຂດເສດຖະກິດພິເສດ, ເຂດເສດຖະກິດສະເພາະ ເພື່ອໃຫ້ກຳໄດ້ສັນຍາແຮງງານ, ເງິນເດືອນພື້ນຖານ, ໄດ້ຮັບການຄຸ້ມຄອງຕາມກົດໝາຍວ່າດ້ວຍແຮງງານ ແລະ ກົດໝາຍວ່າດ້ວຍການປະກັນສັງຄົມ, ເກັບກຳຕຳແໜ່ງງານຫວ່າງ, ຄວາມຕ້ອງການແຮງງານເພື່ອປະກາດຮັບສະໝັກແຮງງານ ແລະ ຈັດສັນເຂົ້າຕາມ ຄວາມຕ້ອງການຈັດຕັ້ງການຝຶກຢູ່ບັນດາສູນ, ຝຶກກ່ອນເຂົ້າສູ່ຕຳແໜ່ງງານ, ສຳລັບແຮງງານລາວ ທີ່ກັບຄືນມາຈາກຕ່າງປະເທດໃຫ້ສືບຕໍ່ເກັບກຳຂໍ້ມູນ, ຂຶ້ນບັນຊີເພື່ອຈັດເຂົ້າສູ່ຕຳ ແໜ່ງງານພາຍໃນ, ຈັດຕັ້ງການຝຶກສີມືແຮງງານ ເພື່ອປະກອບອາຊີບອິດສະຫຼະຕາມທ່າແຮງບົ່ມຊ້ອນຂອງທ້ອງຖິ່ນ ແລະ ແຮງງານ, ສຸມໃສ່ປະສານສົມທົບກັບພາກສ່ວນ ຕ່າງໆເຮັດວຽກງານສຶກສາອົບຮົມແນວຄິດ, ປຸກລະດົມນ້ຳໃຈຮັກຊາດ, ຮັກບ້ານເກີດເມືອງນອນ, ເຄົາລົບລັດຖະທຳມະນູນ ແລະ ກົດໝາຍ. ໃນກໍລະນີທີ່ແຮງງານ ດັ່ງກ່າວ ມີຈຸດປະສົງຈະໄປອອກແຮງງານຢູ່ຕ່າງປະເທດກໍ່ໃຫ້ໄປຖືກຕ້ອງຕາມກົດໝາຍ;
- ຝຶກສີມືແຮງງານໃນໄລຍະສັ້ນ ແລະ ໄລຍະຍາວໃຫ້ຜູ້ບໍ່ມີອາຊີບ, ຜູ້ຕ້ອງການປ່ຽນອາຊີບ, ຜູ້ວ່າງງານທີ່ຈະເຂົ້າສູ່ຕຳແໜ່ງງານໃຫມ່ຢູ່ບັນດາສູນ ຂອງຂະແໜງແຮງງານ ແລະ ສະຫວັດດີການສັງຄົມເຊັ່ນ: ສະຖາບັນພັດທະນາສີມືແຮງງານລາວ, ສູນພັດທະນາສີມືແຮງງານລາວ-ເກົາຫຼີ ຢູ່ນະຄອນຫຼວງວຽງຈັນ, ບໍ່ແກ້ວ, ອຸດົມໄຊ, ຈຳປາສັກ, ອັດຕະປື ແລະ ບັນດາສູນຂອງຂະແໜງການອື່ນໆ ລວມທັງຂອງອົງການຈັດຕັ້ງມະຫາຊົນ ແລະ ຮ່ວມກັບຜູ້ໃຊ້ແຮງງານຝຶກ ກ່ອນເຂົ້າສູ່ຕຳແໜ່ງງານຕົວຈິງໃຫ້ໄດ້ຫຼາຍ;

- ສືບຕໍ່ປັບປຸງ ແລະ ກໍ່ສ້າງພື້ນຖານໂຄງລ່າງ ດ້ານການພັດທະນາສີມືແຮງງານ ໃຫ້ມີຄວາມເຂັ້ມແຂງກວ່າເກົ່າ ໂດຍ ປະສານກັບນັກລົງທຶນພາຍໃນ ແລະ ຕ່າງປະເທດ ເຂົ້າມາເປັນຄູ່ຮ່ວມພັດທະນາ ເພື່ອສຶກສາຄວາມເປັນໄປໄດ້ໃນ ການກໍ່ສ້າງສູນພັດທະນາສີມືແຮງງານຄົບວົງຈອນໃໝ່ເພີ່ມຕື່ມ. ພ້ອມນັ້ນກໍ່ສືບຕໍ່ຮ່ວມມືກັບລັດຖະບານ ສປ ຈີນ ຈັດຕັ້ງປະຕິບັດໂຄງການຮ່ວມມືປັບປຸງສູນພັດທະນາສີມືແຮງງານຢູ່ ແຂວງອຸດົມໄຊ ໃຫ້ສໍາເລັດຕາມແຜນ.

**1.10. ກະຊວງຍຸຕິທໍາ ເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

ຮີບຮ້ອນຄົ້ນຄວ້າສ້າງ ແລະ ປັບປຸງບັນດາກົດໝາຍ ແລະ ນິຕິກໍາໃຕ້ກົດໝາຍ ທີ່ຕິດພັນກັບ 2 ວາລະແຫ່ງຊາດ ໃຫ້ມີຄວາມສອດຄ່ອງກັບການຈັດຕັ້ງປະຕິບັດຕົວຈິງ ໂດຍສະເພາະແມ່ນກົດໝາຍວ່າດ້ວຍງົບປະມານ, ກົດໝາຍວ່າດ້ວຍ ການຄຸ້ມຄອງໜີ້ສິນສາທາລະນະ, ກົດໝາຍວ່າດ້ວຍ ຊັບສິນຂອງລັດ, ກົດໝາຍວ່າດ້ວຍ ການສົ່ງເສີມການລົງທຶນ, ກົດໝາຍວ່າດ້ວຍແຮ່ທາດ, ກົດໝາຍວ່າດ້ວຍ ອາກອນທີ່ດິນ ແລະ ຊັບສິນ, ກົດໝາຍວ່າດ້ວຍ ອາກອນສິ່ງແວດລ້ອມ ແລະ ກົດໝາຍ ອື່ນທີ່ກ່ຽວຂ້ອງ ໃຫ້ສໍາເລັດກ່ອນຕົ້ນປີ 2022.

**1.11. ກະຊວງພາຍໃນເປັນເຈົ້າການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

- ປັບປຸງກົງຈັກການບໍລິຫານລັດ ໃຫ້ກະທັດຮັດ ເພື່ອປະຢັດລາຍຈ່າຍບໍລິຫານ;
- ຄົ້ນຄວ້າຂໍ້ມູນ, ຮູບແບບ ແລະ ເງື່ອນໄຂ ເພື່ອຫັນຫົວໜ່ວຍວິຊາການ ຂອງບັນດາກະຊວງ, ອົງການທີ່ມີລາຍຮັບທາງດ້ານການເງິນ ໄປກຸ້ມຕົນເອງດ້ານງົບປະມານໃຫ້ເປັນຮູບປະທໍາ;
- ປັບປຸງຄຸນນະພາບ ຂອງພະນັກງານ-ລັດຖະກອນ ໃຫ້ສາມາດຫຼຸດຈໍານວນພົນລົງ ພ້ອມທັງຫຼຸດເງິນອຸດໜູນທີ່ບໍ່ສອດຄ່ອງ;
- ປັບປຸງການກໍານົດຕໍາແໜ່ງງານ ໃຫ້ສົມຄູ່ກັບວຽກຕົວຈິງ.

**1.12. ບັນດາກະຊວງ-ອົງການ ທີ່ປິ່ນອ້ອມເປັນເຈົ້າການໃນການສົມທົບກັບຂະແໜງການກ່ຽວຂ້ອງຂັ້ນສູນກາງ ແລະ ອົງການປົກຄອງທ້ອງຖິ່ນ ຮັບຜິດຊອບໃນການຈັດຕັ້ງປະຕິບັດບັນດາວຽກງານ ດັ່ງນີ້:**

ຈັດຕັ້ງເຜີຍແຜ່, ເຊື່ອມຊຶມ ໃຫ້ຖັນແຖວພະນັກງານ, ສະມາຊິກພັກ ທີ່ຢູ່ພາຍໃຕ້ການຄຸ້ມຄອງຂອງການນໍາ ຮັບຮູ້ ແລະ ເຂົ້າໃຈຢ່າງຖືກຕ້ອງ ຕໍ່ຄວາມສໍາຄັນ ແລະ ຄວາມຈໍາເປັນ ໃນການສ້າງ 2 ວາລະແຫ່ງຊາດ ພ້ອມທັງໃຫ້ຄວາມຮ່ວມມື ແລະ ອໍານວຍຄວາມສະດວກ ໃນການຈັດຕັ້ງປະຕິບັດ 2 ວາລະ ແຫ່ງຊາດ ດັ່ງກ່າວ ຕາມພາລະບົດບາດ ສິດ ແລະ ໜ້າທີ່ຂອງຕົນ.

**1.13. ນະຄອນຫຼວງວຽງຈັນ ແລະ ບັນດາແຂວງທົ່ວປະເທດ ເປັນເຈົ້າການ ສ້າງແຜນຜັນຂະຫຍາຍ 2 ວາລະແຫ່ງຊາດຢູ່ທ້ອງຖິ່ນ ໂດຍອີງໃສ່ສະພາບຈຸດພິເສດຄວາມຫຍຸ້ງຍາກຕົວຈິງ ຂອງແຕ່ລະທ້ອງຖິ່ນ, ໃນນັ້ນໃຫ້ເອົາໃຈໃສ່ບາງບັນຫາຄື:**

- ໃຫ້ສືບຕໍ່ເພີ່ມທະວີການສຶກສາອົບຮົມ ການເມືອງແນວຄິດ ຕໍ່ຖັນແຖວພະນັກງານ, ສະມາຊິກພັກ, ກໍາລັງປະກອບອາວຸດທົ່ວປວງຊົນ ແລະ ອົງການປົກຄອງທ້ອງຖິ່ນ ເພື່ອໃຫ້ທຸກພາກສ່ວນໄດ້ຮັບຮູ້, ເຂົ້າໃຈຢ່າງຖືກຕ້ອງ ກ່ຽວກັບຄວາມໝາຍຄວາມສໍາຄັນ, ຄວາມຈໍາເປັນໃນການສ້າງ ແລະ ຈັດຕັ້ງປະຕິບັດ 2 ວາລະແຫ່ງຊາດ. ຈາກນັ້ນ, ໃຫ້ທຸກພາກສ່ວນເຂົ້າຮ່ວມຈັດຕັ້ງປະຕິບັດຕົວຈິງຢ່າງຕັ້ງໜ້າ ເຮັດໃຫ້ 2 ວາລະແຫ່ງຊາດ ໄດ້ຮັບການຈັດຕັ້ງປະຕິບັດບັນລຸໄດ້ຈຸດປະສົງ ແລະ ຄາດໝາຍທີ່ວາງໄວ້;
- ສືບຕໍ່ເອົາໃຈໃສ່ປັບປຸງຂອດຂັ້ນ, ກົນໄກການບໍລິຫານລັດຂອງອົງການປົກຄອງທຸກຂັ້ນ ຕາມທິດກະທັດຮັດ, ວ່ອງໄວ, ໂປ່ງໃສ ແລະ ມີລັກສະນະບຸກທະລຸຢ່າງແທ້ຈິງ ໂດຍໃຫ້ອົງການປົກຄອງ ແລະ ບຸກຄະລາກອນ

ທຸກຂັ້ນ ລວມທັງຢູ່ຂັ້ນບ້ານ ໃຫ້ມີຄວາມເຂັ້ມແຂງ ສາມາດຈັດຕັ້ງປະຕິບັດຕາມ 3 ຫຼັກການ: " ເດັດຂາດ, ໂປ່ງໃສ ແລະ ຫຼັກວິຊາການ" ບົນຈິດໃຈບໍລິການຮັບໃຊ້ປະຊາຊົນດ້ວຍຄວາມຊື່ສັດບໍລິສຸດ ທັງເປັນແບບຢ່າງນຳໜ້າ ໃຫ້ປະຊາຊົນ ເພື່ອປຸກລະດົມປະຊາຊົນໃຫ້ສະໝັກໃຈ ແລະ ຕື່ນຕົວເຂົ້າຮ່ວມໃນການປະຕິບັດແນວທາງນະໂຍບາຍຂອງພັກ, ລະບຽບກົດໝາຍຂອງລັດ ທັງເປັນຫູເປັນຕາຊ່ວຍອຳນາດການປົກຄອງ ແລະ ເຈົ້າໜ້າທີ່ລັດດ້ວຍຄວາມເປັນເຈົ້າການ;

- ສືບຕໍ່ເສີມຂະຫຍາຍມູນເຊື້ອອັນດີງາມ ຂອງຕົນ ໃນການປະຕິບັດແນວທາງ, ແຜນນະໂຍບາຍຂອງພັກ-ລັດ ແລະ ຄະນະພັກຂັ້ນຕົນ ໃນແຕ່ລະໄລຍະລວມທັງ 2 ວາລະແຫ່ງ ຊາດດ້ວຍການສືບຕໍ່ສຶກສາອົບຮົມ, ນຳພາແນວຄິດປະຊາຊົນບັນດາເຜົ່າ ໃຫ້ເປັນປົກກະຕິ, ສ້າງນິຕິກຳຄຸ້ມຄອງຂອງຂັ້ນຕົນ ໃຫ້ສອດຄ່ອງ, ຈັດຕັ້ງປະຕິບັດຖືກຕ້ອງ ແລະ ເຂັ້ມງວດ, ສ້າງແຜນການແຂງຂັນຮັກຊາດ ແລະ ພັດທະນາ ເປັນຕົ້ນແມ່ນ: ຂະບວນການສ້າງບ້ານພັດທະນາ ແລະ ບ້ານປອດຢາເສບຕິດ ໃຫ້ເປັນຂະບວນການກວ້າງຂວາງ ແລະ ຟົດຟື້ນ;
- ໃນໄລຍະການຈັດຕັ້ງປະຕິບັດບັນດາວຽກງານຕ່າງໆ ທີ່ຕິດພັນກັບ 2 ວາລະແຫ່ງຊາດ ຢູ່ຂັ້ນແຂວງ ແລະ ທິດຊີ້ນຳທີ່ໄດ້ກ່າວມາຂ້າງເທິງນີ້ ຕ້ອງໄດ້ປະຕິບັດລະບອບການຕິດຕາມ, ກວດກາ, ຊຸກຍູ້, ຖອດຖອນບົດຮຽນ ແລະ ລາຍງານຜົນ ຂອງແຕ່ລະໄລຍະໃຫ້ທ່ານ ນາຍົກລັດຖະມົນຕີ, ບັນດາທ່ານ ຮອງນາຍົກລັດຖະມົນຕີ ແລະ ພາກສ່ວນກ່ຽວຂ້ອງຂັ້ນສູນກາງຊາບໃນແຕ່ລະເດືອນ ຢ່າງເປັນປົກກະຕິ.

**ມາດຕາ 2: ມາດຕະການປະຕິບັດ**

2.1 ມອບໃຫ້ຮອງນາຍົກລັດຖະມົນຕີ, ລັດຖະມົນຕີກະຊວງແຜນການ ແລະ ການລົງທຶນ ເປັນໃຈກາງປະສານກັບບັນດາຂະແໜງການທີ່ກ່ຽວຂ້ອງ ຮີບຮ້ອນນຳເອົາມະຕິ ສະບັບນີ້ ໄປຜັນຂະຫຍາຍເປັນແຜນງານ, ແຜນວຽກ ແລະ ໂຄງການລະອຽດ ຂອງແຕ່ລະພາກສ່ວນໃຫ້ລະອຽດຈະແຈ້ງ. ບົນພື້ນຖານນັ້ນ ກໍ່ໃຫ້ແຕ່ລະຂະແໜງການສ້າງແຜນຈັດຕັ້ງປະຕິບັດຕົວຈິງ ຂອງຂະແໜງການຕົນ, ຊຶ່ງໄດ້ມີຮ່າງແຜນຄາດຄະເນໄລຍະເວລາ ໃນການຈັດຕັ້ງປະຕິບັດ ຄັດຕິດມາພ້ອມນີ້;

2.2 ໃຫ້ບັນດາກະຊວງ-ອົງການທຽບເທົ່າລັດ, ບັນດາແຂວງ, ນະຄອນຫຼວງວຽງຈັນ ແລະ ພາກສ່ວນທີ່ກ່ຽວຂ້ອງ ຈົ່ງຮັບຮູ້ ແລະ ພ້ອມກັນຈັດຕັ້ງປະຕິບັດ ມະຕິສະບັບນີ້ ໃຫ້ປະກົດຜົນເປັນຈິງ;

2.3 ມອບໃຫ້ບັນດາທ່ານ ຮອງນາຍົກລັດຖະມົນຕີ ຕິດຕາມ, ກວດກາ ແລະ ຊຸກຍູ້ການຈັດຕັ້ງປະຕິບັດມະຕິສະບັບນີ້ ຕາມຄວາມຮັບຜິດຊອບຂອງຕົນ ແລ້ວລາຍງານທ່ານ ນາຍົກລັດຖະມົນຕີ ຊາບເປັນແຕ່ລະໄລຍະ.

**ມາດຕາ 3: ມະຕິສະບັບນີ້ ມີຜົນສັກສິດນັບແຕ່ມື້ລົງລາຍເຊັນເປັນຕົ້ນໄປ.**

ຕາງໜ້າລັດຖະບານ ແຫ່ງ ສປປ ລາວ
ນາຍົກລັດຖະມົນຕີ

ພັນຄຳ ວິພາວັນ